ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1542 /ຫອຄ.ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 21 ມິຖຸນາ 2018

# ແຈ້ງການ

**ເຖິງ:** ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ

ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ

**ເລື່ອງ:** ການຄວັດຕາປະທັບວິສາຫະກິດ ແລະ ປ້າຍຊື່ວິສາຫະກິດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013;
- ອີງຕາມ ຂໍ້ 7 (1.2.1) 1.2 (1) ຄຳສັ່ງ, ສະບັບເລກທີ 02/ນຍ, ລົງວັນທີ 1 ກຸມພາ 2018, ວ່າດ້ວຍການປັບປຸງບັນດາລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ ຢູ່ ສປປ ລາວ.

ເພື່ອໃຫ້ການຄວັດຕາປະທັບວິສາຫະກິດ ແລະ ປ້າຍຊື່ວິສາຫະກິດ ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ ຕາມເນື້ອໃນ ຈິດໃຈຂອງກົດໝາຍ ແລະ ລະບຽບການດັ່ງກ່າວ, ແນໃສ່ສ້າງບັນຍາກາດ "ການເລີ່ມຕົ້ນທຸລະກິດ" ໃຫ້ມີຄວາມສະດວກ ວ່ອງໄວ, ຫ້ອງການ, ກະຊວງອຸດສາຫະກຳ ແລະການຄ້າ ແຈ້ງມາຍັງພາກສ່ວນກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ການຄວັດຕາປະທັບ ແມ່ນໃຫ້ປະຕິບັດຢ່າງເຂັ້ມງວດ ຕາມບົດບັນຍັດມາດຕາ 21(ໃໝ່) ຂອງກົດໝາຍວ່າດ້ວຍວິສາຫະກິດ, ສະບັບປັບປຸງ - 2013. ຫ້າມອອກໃບອະນຸຍາດຄວັດຕາປະທັບ;

2. ລົບລ້າງການຂໍ ແລະອອກອະນຸຍາດປ້າຍຊື່ວິສາຫະກິດ, ແຕ່ ໃຫ້ວິສາຫະກິດທີ່ກ່ຽວຂ້ອງນຳເອົາໃບທະບຽນວິສາຫະກິດ ໄປຜະລິດປ້າຍ ນຳວິສາຫະກິດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບປ້າຍ ຈາກຂະແໜງການຖະແຫລ່ງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ເລີຍ.

ປ້າຍຊື່ວິສາຫະກິດ ຕ້ອງປະກອບດ້ວຍ:

- ຊື່ວິສາຫະກິດ ຕາມທີ່ບົ່ງໄວ້ໃນໃບທະບຽນວິສາຫະກິດ;
- ເບີໂທລະສັບທີ່ສາມາດຕິດຕໍ່ໄດ້;
- ເລກລະຫັດວິສາຫະກິດ;
- ເລກປະຈຳຕົວຜູ້ເສຍອາກອນ (ຖ້າມີ).



Scanned with CamScanner

ການລະບຸເນື້ອໃນດັ່ງກ່າວ ໃນປ້າຍຊື່ວິສາຫະກິດ ເປັນພາສາລາວ ແລະ/ຫລື ພາສາຕ່າງປະເທດ ລວມທັງຮູບແບບຂອງປ້າຍ ແມ່ນໃຫ້ປະຕິບັດຢ່າງເຂັ້ມງວດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

ທຸກຄັ້ງທີ່ມີການປ່ຽນແປງເນື້ອໃນທະບຽນວິສາຫະກິດ ທີ່ກ່ຽວກັບເນື້ອໃນທີ່ລະບຸໃນປ້າຍຊື່ວິສາຫະກິດ, ວິສາຫະກິດທີ່ກ່ຽວຂ້ອງ ຕ້ອງຜະລິດປ້າຍຊື່ວິສາຫະກິດໃໝ່ໃຫ້ສອດຄ່ອງ.

ແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ. ໒

**ຫົວໜ້າຫ້ອງການ**

ກະຊວງອຸດສາຫະກຳແລະ... ຫ້ອງການ

ນ.ບານສະຕິ ເທບພະວົງ

**ບ່ອນສົ່ງ:**

- ຫ້ອງການ, ກະຊວງປ້ອງກັນຄວາມສະຫງົບ;
- ຫ້ອງການ, ກະຊວງຖະແຫລງຂ່າວ, ວັດທະນາທຳ ແລະທ່ອງທ່ຽວ;
- ພາກສ່ວນຕ່າງໆທີ່ກ່ຽວຂ້ອງ.



Scanned with CamScanner